ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄຄຊ ຮັບຮອງເອົາບາງໜ້າວຽກຕົ້ນຕໍ




ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ I ປະຈຳປີ 2020 ໄດ້ຈັດຂຶ້ນໃນວັນທີ 24 ກຸມພາ 2020 ທີ່ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບາງວຽກງານສຳຄັນຕົ້ນຕໍ ພາຍໃຕ້ການເປັນປະທານຂອງທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ, ປະທານ ຄຄຊ; ພ້ອມນີ້, ກໍ່ມີຄະນະກຳມະການ ຄຄຊ ແລະ ພາກສ່ວນກ່ຽວ ຂ້ອງເຂົ້າຮ່ວມ.

ກອງປະຊຸມ ຄຄຊ ຄັ້ງນີ້ ໄດ້ດຳເນີນໄປທ່າມກາງທີ່ທົ່ວພັກ, ທົ່ວລັດ ພວມສຸມໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ສະເພາະຂະແໜງການເງິນ ພວມສຸມໃສ່ທົບທວນ ຄືນແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາຂອງ ສປປ ລາວ ໃນໄລຍະປີ 2016-2025 ແລະ ວິໄສທັດຮອດປີ 2030 ກໍ່ຄືແຜນຍຸດທະສາດໃນການພັດທະນາຕະຫຼາດທຶນ (2016-2025) ແລະ ໃນເວລານີ້, ກໍ່ຢູ່ໃນທ່າມກາງສະພາບການທີ່ຫຼາຍປະ

ເຫດປະເທດ ພ້ອມເກີດການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (ໂຄວິດ-19) ເຮັດໃຫ້ມີຜູ້ຄົນຕິດເຊື້ອ ແລະ ເສຍຊີວິດຈຳນວນຫຼາຍສົມຄວນ ຊຶ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ເສດຖະກິດຂອງໂລກ ກໍ່ຄືຂອງຊາດ ເປັນຕົ້ນແມ່ນ ລາຍຮັບຈາກການຄ້າ ແລະ ການທ່ອງທ່ຽວ.



ກອງປະຊຸມ ຄຄຊ ໃນເທື່ອນີ້ ຍັງໄດ້ຮັບຟັງ ແລະ ປຶກສາຫາລື ກ່ຽວກັບຄວາມຄືບໜ້າຂອງຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມ ຄຄຊ ຄັ້ງທີ IV ປີ 2019 ຜ່ານມາ ຊຶ່ງໄດ້ປະກອບສ່ວນເຂົ້າໃນການຈັດກອງປະຊຸມຮຽບຮຽງເນື້ອໃນ (ຮ່າງ) ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຮ່ວມກັບພາກສ່ວນກ່ຽວຂ້ອງ; ສຳເລັດການຄົ້ນຄວ້າເອກະສານ ສະເໜີຂໍອອກຈຳໜ່າຍຮຸ້ນຂອງບໍລິສັດເປົ້າໝາຍ 1 ແຫ່ງ ທີ່ມີເປົ້າໝາຍອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ; ໃນກອງປະຊຸມ ຍັງພິຈາລະນາການສະ ເໜີຂໍອອກຈຳໜ່າຍຮຸ້ນຂອງບໍລິສັດ 1 ແຫ່ງ; ຂໍ້ຕົກລົງ ວ່າດ້ວຍການເອົາຮຸ້ນ ເປັນຫຼັກຊັບອ້າງອີງໃນການອອກໃບຢັ້ງຢືນສິດ DR (ສ້າງໃໝ່); ບົດສະຫຼຸບວຽກງານການເຄື່ອນໄຫວຂອງ ສ.ຄຄຊ ແລະ ຂອງຕະຫຼາດຫຼັກຊັບລາວ ປະຈຳ ປີ 2019 ແລະ ແຜນການເຄື່ອນໄຫວ ປະຈຳ ປີ 2020.

ທ່ານຮອງນາຍົກລັດຖະມົນຕີ, ປະທານ ຄຄຊ ໄດ້ຮຽກຮ້ອງໃຫ້ບັນດາຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງໄດ້ເຊີດຊູຄວາມຮັບຜິດຊອບສູງ ແລະ ສຸມທຸກສະຕິປັນຍາຂອງຕົນເຂົ້າໃນການຈັດຕັ້ງປະຕິບັດວຽກງານສຳຄັນຕົ້ນຕໍ ກ່ຽວກັບການຈັດຕັ້ງປະຕິບັດແຜນຍຸດທະສາດໃນການພັດທະນາຕະຫຼາດທຶນໃຫ້ມີປະສິດທິພາບສູງ ບົນພື້ນຖານເພື່ອຜົນປະໂຫຍດລວມຂອງຊາດ.

# ຂ່າວ-ພາບ: ຮັດສະໝີ ດວງສັດຈະ

ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນກີບລາວ